ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຍຸດທະສາດພັດທະນາລະບົບສະຖາບັນການເງິນ-ເງິນຕາ



ກອງປະຊຸມຂະແໜງການທະນາຄານ ປີ 2021 (3 ສິງຫາ 2021); ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ ໄດ້ສະເໜີແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາໄລຍະ 5 ປີຜ່ານມາ (2016-2020) ຊຶ່ງໄດ້ກຳນົດວິໄສທັດຄື: "ຮັບປະກັນສະຖຽນລະພາບດ້ານເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ, ພັດທະນາລະບົບສະຖາບັນການເງິນ-ເງິນຕາ ໃຫ້ເຂັ້ມແຂງ-ໝັ້ນຄົງ ສາມາດແຂ່ງຂັນໃນເງື່ອນໄຂການເຊື່ອມໂຍງກັບສາກົນ" ໂດຍໄດ້ກຳນົດ 4 ຍຸດທະສາດຄື: ຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງຍາວນານ; ພັດທະນາລະບົບສະຖາບັນການເງິນ-ເງິນຕາໃຫ້ເຂັ້ມແຂງ-ໝັ້ນຄົງ; ພັດທະນາລະບົບການຊຳລະແຫ່ງຊາດໃຫ້ເປັນສູນກາງຊຳລະທີ່ທັນສະໄໝ, ປອດໄພ ແລະ ພັດທະນາລະບົບພື້ນຖານໂຄງລ່າງຂອງລະບົບສະຖາບັນການເງິນ-ເງິນຕາ ໃຫ້ສອດຄ່ອງກັບຫຼັກການລວມຂອງສາກົນ ແລະ ເງື່ອນໄຂຂອງປະເທດ.

ທຫລ ໄດ້ຜັນຂະຫຍາຍເປັນແຜນເງິນຕາ 5 ປີ (2016-2020) ແລະ ສ້າງເປັນ 6 ແຜນງານ, 47 ໂຄງການ ແລະ 110 ແຜນວຽກ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຢ່າງເປັນລະບົບ ແລະ ມີການຕິດຕາມປະເມີນໃນແຕ່ລະໄລຍະ. ຜ່ານການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວສາມາດບັນລຸໜ້າວຽກໄດ້ປະມານ 90%. ເຖິງຢ່າງໃດກໍ່ຕາມຜ່ານການຈັດຕັ້ງປະຕິບັດເຫັນວ່າລະບົບສະຖາບການເງິນ ເງິນຕາຂອງ ສປປ ລາວ ໄດ້ຮັບການພັດທະນາ ແລະ ມີທ່າກ້າວດີຂຶ້ນແຕ່ກໍ່ເຫັນວ່າມີບາງບັນຫາທີ່ຈະຕ້ອງໄດ້ມີການປັບປຸງແກ້ໄຂເປັນຕົ້ນ ຂະໜາດຂອງຂະແໜງການເງິນ-ເງິນຕາຍັງໜ້ອຍ, ຄວາມເຂັ້ມແຂງທາງດ້ານທຶນຮອນ, ວິຊາການ, ລະດັບການພັດທະນາເຕັກໂນໂລຊີຍັງບໍ່ທັນສູງເທົ່າທີ່ຄວນທຽບກັບປະເທດພາກພື້ນ ແລະ ສາກົນ, ປະສິດທິພາບເຄື່ອງມືໃນການຄຸ້ມຄອງມະຫາພາກເງິນຕາຍັງຈຳກັດບໍ່ສາມາດຊີ້ນຳບັນຊາຕະຫຼາດໄດ້ດີ, ພື້ນຖານເສດຖະກິດ, ການຜະລິດພາຍໃນບໍ່ທັນເຂັ້ມແຂງພໍ, ບັນຫາການຂາດດຸນງົບປະມານ ແລະ ດຸນການຊຳລະກັບຕ່າງປະເທດຍັງຢູ່ໃນລະດັບສູງ; ການຈໍລະຈອນຂອງເງິນຕາຕ່າງປະເທດຢູ່ນອກລະບົບໃນລະດັບສູງ; ລະບົບສະຖາບັນການເງິນ-ເງິນຕາມີຂະໜາດນ້ອຍ ແລະ ຕົ້ນທຶນບໍລິຫານສູງ; ເຄື່ອງມື ແລະ ກົນໄກໃນການຄຸ້ມຄອງ ແລະ ກວດກາສະຖາບັນການເງິນບໍ່ທັນພຽງພໍ; ລະບົບປ້ອງກັນຄວາມສ່ຽງຂອງສະຖາບັນການເງິນບໍ່ທັນສະໄໝ, ລະບົບການຄຸ້ມຄອງ ແລະ ໂຄງລ່າງພື້ນຖານດ້ານວຽກງານຊຳລະບໍ່ທັນຄົບຖ້ວນສົມບູນ ແລະ ບັນຫາອື່ນໆ; ສະນັ້ນ, ທ່ານຫົວໜ້າຫ້ອງການ ທຫລ ໄດ້ສະເໜີຍຸດທະສາດພັດທະນາລະບົບສະຖາບັນການເງິນ-ເງິນຕາໃນໄລຍະ 5 ປີຕໍ່ໜ້າ 2021-2025 (ສະບັບປັບປຸງ) ໂດຍ ທຫລ ໄດ້ສະເໜີຜ່ານກອງປະຊຸມລັດຖະບານຮັບຮອງເບື້ອງຕົ້ນໂດຍມີວິໄສທັດຮອດປີ 2030 ຄື: "ຮັບປະກັນສະເຖຍລະພາບເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງ, ພັດທະນາລະບົບສະຖາບັນການເງິນ-ເງິນຕາ ໃຫ້

ເຂັ້ມແຂງ-ໝັ້ນຄົງ ແລະ ສາມາດແຂ່ງຂັນໄດ້ໃນເງື່ອນໄຂການເຊື່ອມໂຍງກັບສາກົນ" ຊຶ່ງປັບຈາກ 4 ຍຸດທະສາດເປັນ 7 ຍຸດທະສາດ ຄື: (1) ພັດທະນາຊັບພະຍາກອນມະນຸດທາງດ້ານການເງິນ-ເງິນຕາໃຫ້ເຂັ້ມແຂງ; (2) ພັດທະນາບໍລິຫານລັດໃຫ້ມີຄວາມເຂັ້ມແຂງຮອບດ້ານ; (3) ຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງຍາວນານ; (4) ພັດທະນາລະບົບສະຖາບັນການເງິນໃຫ້ເຂັ້ມແຂງ-ຍືນຍົງ; (5) ພັດທະນາລະບົບການຊຳລະໃຫ້ທັນສະໄໝ ແລະ ປອດໄພ; (6) ພັດທະນາການບໍລິການທາງການເງິນ-ທະນາຄານຢ່າງທົ່ວເຖິງ; ແລະ (7) ເຊື່ອມໂຍງກັບສາກົນຢ່າງກວ້າງຂວາງ ແລະ ມີປະສິດທິຜົນສູງ.

ໃນແຜນ 5 ປີ ຕໍ່ໜ້າແມ່ນຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຢ່າງມີຄຸນນະພາບ, ສົມດຸນ ແລະ ຍືນຍົງ; ຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກ ເພື່ອຫຼຸດຜ່ອນການຂາດດຸນກັບຕ່າງປະເທດ; ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກລະດັບດີຂຶ້ນ; ຮັບປະກັນການຫັນເປັນທັນສະໄໝ, ມີຄວາມໝັ້ນຄົງ ແລະ ຍືນຍົງຂອງລະບົບທະນາຄານ-ສະຖາບັນການເງິນ; ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງສັງຄົມແບບຍືນຍົງ ໃຫ້ກວ້າງຂວາງຜ່ານຕະຫຼາດເງິນ ແລະ ຕະຫຼາດທຶນ; ພັດທະນາ ແລະ ຄຸ້ມຄອງລະບົບການຊຳລະແຫ່ງຊາດໃຫ້ມີຄວາມທັນສະໄໝ, ລວມສູນສອດຄ່ອງມາດຕະຖານສາກົນ ແລະ ແທດເໝາະກັບສະພາບຕົວຈິງຂອງປະເທດ; ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຄຸ້ມຄອງບໍລິຫານລັດ ແລະ ອົງກອນປົ່ນອ້ອມທີ່ຈຳເປັນຢ່າງເປັນລະບົບຄົບຊຸດ (ເປັນຕົ້ນ ດ້ານນິຕິກຳ, ລະບົບການບັນຊີ, ລະບົບຂໍ້ມູນ-ຂ່າວສານ ແລະ ການຮັກສາຄວາມປອດໄພ,ລະບົບສະຖິຕິ, ລະບົບຕິດຕາມກວດກາ); ຖືສຳຄັນດ້ານແບບແຜນການນຳພາ-ວິທີເຮັດວຽກ ທີ່ມີວິທະຍາສາດ ແລະ ຍົກສູງຄຸນນະພາບດ້ານວິຊາສະເພາະຂອງບຸກຄະລາກອນໃນຂົງເຂດທະນາຄານ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຕົວຈິງ; ຮ່ວມມືເຊື່ອມໂຍງ ແລະ ເຊື່ອມຈອດພາຍໃນປະເທດ, ພາກພື້ນ ແລະ ສາກົນດ້ວຍຄວາມເຂັ້ມແຂງ ທັນສະໄໝ. ເພື່ອບັນລຸຕາມທິດທາງ, ຄາດໝາຍ ແລະ ໜ້າວຽກທີ່ໄດ້ກຳນົດໃນແຜນຍຸດທະສາດ, ທຫລ ໄດ້ຜັນຂະຫຍາຍເປັນແຜນງານ-ໂຄງການຈຸດສຸມໃນຕໍ່ໜ້າ ຊຶ່ງປະກອບມີ: 10 ແຜນງານ, 48 ໂຄງການ, 143 ແຜນວຽກໂດຍຜັນຂະຫຍາຍຍຸດທະສາດນີ້ສະໜັບສະໜູນການແກ້ໄຂສະພາບຄວາມຫຍຸ້ງຍາກເສດຖະກິດການເງິນ ແລະ ຄາດວ່າຈະມີຜົນຄືບໜ້າເປັນກ້າວໆ.

**# ໂດຍ: ຣັດສະໝີ ດວງສັດຈະ**

# ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ